**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດທີ 28 ມິຖຸນາ 2020 (06-28-2020)**

# ຄວາມອົດທົນຂອງຄວາມຫວັງຂອງພວກເຮົາ.

ເມື່ອໃດທີ່ທ່ານຕ້ອງການຄວາມອົດທົນໃຫ້ວຽກງານ ຫຼື ເປົ້າໝາຍໄດ້ສຳເລັດ?

**ຈຸດສຳຄັນໃນບົດຮຽນ:** ພວກເຮົາສາມາດອົດທົນຕໍ່ຄວາມທຸກທໍຣະມານເພາະຄວາມຫວັງຂອງພວກເຮົາໃນພຣະເຢຊູ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**
ບໍ່ມີຜູ້ໃດລົງທະບຽນຈິດຊື່ເພື່ອຄວາມເຈັບປວດ,ຄວາມໂສກເສົ້າ, ຄວາມຜິດຫວັງ, ການທໍຣະຍົດ (ເນຣະຄຸນ), ຫຼືການປະຕິເສດ, ແຕ່ສິ່ງເຫຼົ່ານີ້ກໍ່ເກີດຂຶ້ນ. ການຮັກພຣະເຢຊູບໍ່ໄດ້ປ້ອງກັນພວກເຮົາຈາກການເຈັບປວດແລະທົນທຸກທໍຣະມານ. ຂ້າພະເຈົ້າໄດ້ມີປະສົບການເຣື່ອງນີ້ດ້ວຍຕົນເອງໃນປີ ຄ.ສ. 2018. ເມື່ອຂ້າພະເຈົ້າໄດ້ກວດພົບວ່າມີພະຍາດມະເລງ. ການຢຽວຢາຮັກສາ, ບວກໃສ່ກັບການຂຶ້ນໆລົງໆດ້ານອາຣົມແມ່ນເກີນກວ່າທີ່ຂ້ອຍຄາດໝາຍໄວ້. ໃນເວລາດຽວກັນ, ດ້ວຍແຮງອະທິຖານຂອງໄພ່ພົນຂອງພຣະເຈົ້າ, ການຊົງປາກົດຂອງພຣະວິນຍານບໍຣິສຸດ, ແລະດ້ວຍພຣະຄຸນຂອງພຣະເຈົ້າ, ຂ້າພະເຈົ້າມີຄວາມຫວັງ. ຕລອດການຮັກສາ, ຂ້າພະເຈົ້າໄດ້ອ້າງເອົາຄຳສັນຍາຈາກພຣະຄັມພີ. ບາງມື້, ຂ້າພະເຈົ້າໄດ້ອ້າງຄຳສັນຍາໃນຂນະທີ່ອະທິຖານວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ, ຂ້ານ້ອຍເຊື່ອ. ໂຜດຊົງຊ່ວຍຂ້ານ້ອຍບໍ່ເຊື່ອ! (ໃນສິ່ງຮ້າຍທັງຫຼາຍນັ້ນ)". ໃນຂນະທີ່ຂ້າພະເຈົ້າຂຽນເຣື່ອງນີ້, ການກວດສອບ (scan) ທຸກຢ່າງຂອງຂ້າພະເຈົ້າແມ່ນຈະແຈ້ງ, ແລະຂ້າພະເຈົ້າມີຄວາມຊົມຊື່ນຍິນດີໃນສິ່ງນັ້ນ. ແຕ່ຫຼາຍກວ່າການກວດສອບທີ່ຈະແຈ້ງ, ຂ້າພະເຈົ້າມີຄວາມຊົມຊື່ນຍິນດີໃນການທີ່ໄດ້ຮູ້ວ່າ: ອົງພຣະຄຣິດຊົງທອດພຣະເນດເຫັນ, ຊົງໄດ້ຍິນ, ຊົງຮູ້ເຣື່ອງລາວ, ແລະ ຊົງຫ່ວງໄຍຂ້າພະເຈົ້າ. ມັນເປັນສິ່ງສຳຄັນສຳລັບຄວາມເຊື່ອຂອງພວກເຮົາທີ່ພວກເຮົາບໍ່ຍອມອະນຸຍາດໃຫ້ມະເຮັງຫຼືປະສົບການທີ່ຮ້າຍແຮງຫາຍນະ ຫລືປະສົບການທີ່ເປັນອັນຕະລາຍມາຄວບຄຸມຊີວິດຂອງພວກເຮົາ. ອົງພຣະຄຣິດຕ້ອງເປັນ ແຫຼ່ງແລະຄວາມພໍພຽງຂອງຕົວຕົນຂອງພວກເຮົາ. ພວກເຮົາສາມາດອົດທົນເພາະວ່າຄວາມຫວັງຂອງພວກເຮົາຕັ້ງໝັ້ນຢູ່ໃນພຣະອົງ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

## ການສຶກສາພຣະຄັມພີ

### 1. 1 ເປໂຕ3:8-12

8 *ໃນທີ່ສຸດນີ້ພວກທ່ານທຸກຄົນຈົ່ງເປັນນ້ຳໜຶ່ງໃຈດຽວກັນຈົ່ງເຫັນອົກເຫັນໃຈກັນຈົ່ງຮັກກັນເໝືອນພີ່ນ້ອງຮ່ວມ*
*ທ້ອງຈົ່ງມີຈິດໃຈເອັນດູແລະຖ່ອມລົງ.*
9 *ຢ່າຮ້າຍຕອບແທນການຮ້າຍຢ່າດ່າຕອບແທນການດ່າແຕ່ກົງກັນ*
*ຂ້າມ, ຈົ່ງອວຍພອນແກ່ເຂົາດ້ວຍວ່າພຣະອົງຊົງເອີ້ນພວກທ່ານໃຫ້ເຮັດການຢ່າງນີ້ແຫລະເພື່ອພວກທ່ານ*
*ຈະໄດ້ຮັບພຣະພອນມາເປັນມໍຣະດົກ.*
10 *ເພາະວ່າ, "ຜູ້ທີ່ຢາກຮັບຊີວິດອັນດີແລະປາຖນາທີ່ຈະເຫັນວັນສນຸກ*
*ກໍໃຫ້ຜູ້ນັ້ນຫ້າມລີ້ນຂອງຕົນບໍ່ໃຫ້ເວົ້າຄວາມຊົ່ວແລະຫ້າມປາກບໍ່ໃຫ້ກ່າວຄຳອຸບາຍລໍ້ລວງ.*
11 *ຈົ່ງໃຫ້ຜູ້ນັ້ນ*
*ເວັ້ນໜີຈາກການຊົ່ວແລະເຮັດການດີຈົ່ງໃຫ້ຜູ້ນັ້ນສແວງຫາສັນຕິສຸກແລະພະຍາຍາມຕິດຕາມໄປ."*
12 *"ພຣະ*

*ເນດຂອງອົງພຣະຜູ້ເປັນເຈົ້າຊົງເຝົ້າເບິ່ງຄົນຊອບທັມ ແລະພຣະອົງກໍຊົງຮັບຟັງຄຳອ້ອນວອນຂອງເຂົາແຕ່ ພຣະພັກຂອງພຣະອົງຊົງຕໍ່ສູ້ບັນດາຄົນທີ່ເຮັດການຊົ່ວ."*

ຂໍ້ພຣະຄັມພີເຫຼົ່ານີ້ໃນ 1 ເປໂຕ ບົດທີ່ 3 ແມ່ນຊຸດຂອງບົດສລຸບຫຍໍ້-ຈຸດກວດກາຄວາມເຕີບໃຫຍ່ສຳລັບການປະເມີນຜົນສ່ວນຕົວຂອງຊີວິດຝ່າຍຈິດວິນຍານຂອງພວກເຮົາ.ເປໂຕໄດ້ຮ້ອງຂໍຄວາມກະຕືລືລົ້ນເພື່ອຄວາມສອດຄ່ອງຄວາມຊື່ສັດ, ແລະການເຊື່ອຟັງຢ່າງຈິງໃຈ. ເປໂຕໄດ້ໃຫ້ກຳນົດ 6 ວິຖີທາງທີ່ພວກເຮົາຈະຕ້ອງ "ເຮັດດັ່ງເວົ້າ" ແລະ ດຳເນີນຊີວິດຕາມຄວາມເຊື່ອຂອງພວກເຮົາດັ່ງຕໍ່ລົງໄປນີ້:

1. **ຄວາມສາມັກຄີ.** ຄຳສັ່ງທີ່: "ໃຫ້ເປັນຈິດໃຈດຽວກັນ" ນັ້ນບໍ່ໄດ້ໝາຍເຖິງທຸກໆຄວາມລະອຽດຖີ່ຖ້ວນແຕ່ແມ່ນໝາຍເຖິງຄວາມສາມັກຄີໃນ <u>ຈຸດສຳຄັນຂອງຄວາມເຊື່ອ</u>. ຜູ້ທີ່ເຊື່ອສະທ້ອນເຖິງການອຸທິດຕົນຕໍ່ພຣະເຈົ້າບໍ່ແມ່ນໃນຄວາມເປັນເອກພາບ ແຕ່ແມ່ນໃນຄວາມສາມັກຄີ (ຄວາມເປັນນຶ່ງ). ພວກເຮົາບໍ່ສົມຄວນກັງວົນໃນເລື່ອງເລັກໆນ້ອຍໆ. ແຕ່ກົງກັນຂ້າມ, ພວກເຮົາສົມຄວນຈົດຈໍ່ໃສ່ໃນສິ່ງທີ່ພວກເຮົາມີຮ່ວມກັນໃນອົງພຣະຄຣິດ.
2. **ຄວາມເປັນຫ່ວງເຊິ່ງກັນແລະກັນ.** ການ"ເຫັນອົກເຫັນໃຈ"ໝາຍເຖິງການມີຄວາມເມດຕາກະຣຸນາຫຼືມີຄວາມຮູ້ສຶກຮ່ວມກັບຜູ້ອື່ນແລະການຮ່ວມທົນທຸກທໍຣະມານດ້ວຍກັນ.ນີ້ບໍ່ພຽງແຕ່ກ່ຽວຂ້ອງກັບເລື່ອງຂອງຄວາມໂສກເສົ້າເທົ່ານັ້ນ, ແຕ່ສິ່ງໃດກໍ່ຕາມທີ່ສົ່ງຜົນກະທົບຕໍ່ຝູງຄົນແລະເຮັດໃຫ້ພວກເພິ່ນມີຄວາມຮູ້ສຶກດ້ານອາຣົມ."*ຈົ່ງຊົມຊື່ນຍິນດີກັບຜູ້ທີ່ມີຄວາມຊົມຊື່ນຍິນດີ ຈົ່ງຮ້ອງໄຫ້ກັບຜູ້ທີ່ຮ້ອງໄຫ້*" (ໂຣມ 12:15). ຄວາມເປັນຫ່ວງຂອງພວກເຮົາຕໍ່ຄົນອື່ນໃນທີ່ສຸດ ກໍ່ຫຼາຍກວ່າຄວາມກັງວົນຫ່ວງໃຍສຳລັບຕົນເອງ.
3. **ຄວາມຮັກ.** ເປໂຕໄດ້ໃຊ້ຄຳເວົ້າພາສາ ກຣີກ "ຟີລາເດລໂຟສ໌" (*philadelphos*) ເພື່ອຖ່າຍທອດຄວາມຮັບຜິດຊອບຂອງຊາວຄຣິສຕຽນ ທີ່ຈະຕ້ອງຮັກຊຶ່ງກັນແລະກັນ ໃນຖານະອ້າຍເອື້ອຍນ້ອງໃນອົງພຣະຄຣິດ. ພວກເຮົາສະທ້ອນໃຫ້ເຫັນຄວາມຮັກຂອງພວກເຮົາສຳລັບອົງພຣະຄຣິດ ໂດຍການສະແດງອອກໃນຄວາມຮັກຂອງພວກເຮົາຕໍ່ຄອບຄົວຂອງພຣະເຈົ້າ.
4. **ຄວາມເຫັນອົກເຫັນໃຈ.** ຄຣິສຕະຈັກສົມຄວນເປັນບ່ອນແຫ່ງຄວາມເຫັນອົກເຫັນໃຈ ທີ່ຊຶ່ງພວກເຮົາເຮັດຜິດພາດດ້ານຂ້າງຂອງພຣະຄຸນ ແລະເຮັດຫຼາຍຈົນເກີນໄປແທນທີ່ບໍ່ພຽງພໍ. ພຣະເຢຊູໄດ້ຊົງເປັນແບບຢ່າງໃນເລື່ອງນີ້ ໂດຍຜ່ານການຊົງປະກອບພຣະຣາຊພາຣະກິຈທີ່ອ່ອນໂຍນຂອງພຣະອົງຕໍ່ປະຊາກອນຂອງພຣະອົງ.
5. **ຄວາມຖ່ອມຕົວ.** ເປໂຕໄດ້ຮູ້ວ່າຄຣິສຕຽນຕ້ອງມີຄວາມປະທັບໃຈໃນຕົນເອງທີ່ແທ້ຈິງ. ພວກເຮົາວັດແທກຕົວເອງໂດຍຄວາມສັກສິດ(ບໍຣິສຸດ)ຂອງອົງພຣະຄຣິດແລະບໍ່ມີທີ່ວ່າງສຳລັບກຽດສັກສີຂອງຕົນ. ພວກເຮົາເຫັນລະດັບຂອງຄວາມຖ່ອມໃຈຂອງພວກເຮົາໃນເວລາທີ່ຖືກວິພາກວິຈານ ຫຼື ໃນເມື່ອຄົນອື່ນໄດ້ຮັບກຽດຕິຍົດເໜືອກວ່າຕົນເອງ.
6. **ການໃຫ້ອະພັຍ.** ຈິດໃຈທີ່ບໍ່ມີການໃຫ້ອະພັຍຈະລົບກວນຄວາມສາມັກຄີທັມ, ທຳລາຍຄວາມຊົມຊື່ນຍິນດີ, ແລະ ໃນທີ່ສຸດກໍ່<u>ສົ່ງຮາກແຫ່ງຄວາມຂົມຂື່ນຫຍັ່ງເລິກເຂົ້າໄປໃນຫົວໃຈ</u>.

| |
|---|
| ພຣະຄັມພີຊ່ວງນີ້ສອນເຣື່ອງການປຽບທຽບແລະກົງກັນຂ້າມກັບຄຸນຄ່າໃນວັທນະທັມຂອງພວກເຮົາຢ່າງໃດ? |

## 2. <u>1 ເປໂຕ 3:13-14</u>

*13 ຖ້າທ່ານທັງຫລາຍກາຍເປັນຄົນໝັ່ນໃຈເຮັດການດີໃຜໜໍຈະເຮັດຮ້າຍແກ່ທ່ານ. 14 ແຕ່ເຖິງແມ່ນວ່າທ່ານທັງ-
ຫລາຍທົນທຸກເພາະໄດ້ເຮັດການຊອບທັມພວກທ່ານກໍເປັນສຸກ. ແຕ່ຢ່າຊູ່ຢ້ານການທີ່ເຂົາເຮັດໃຫ້ພວກທ່ານ
ສະດຸ້ງຕົກໃຈນັ້ນແລະຢ່າວິຕົກກັງວົນ.*

ຄວາມຫວັງໃນອົງພຣະຄຣິດຂອງພວກເຮົາຈະນຳພາພວກເຮົາ ຜ່ານທຸກໆສະພາບການທີ່ຍຸ້ງຍາກ ຫຼືຄວາມທຸກທໍລະມານ. ພວກເຮົາອາດຈະປະສົບກັບຊ່ວງເວລາແຫ່ງຄວາມທຸກທໍຣະມານທີ່ບໍ່ຍຸດຕິທັມ ເພາະວ່າພວກເຮົາຢືນຢູ່ເພື່ອສິ່ງທີ່ຖືກຕ້ອງ. ເຖິງຢ່າງໃດກໍ່ຕາມ, ເມື່ອຄວາມຫວັງຂອງພວກເຮົາມີຮາກຖານຢູ່ໃນພຣະຄຣິດ, ການອົດທົນຕໍ່ການທົດລອງທີ່ພວກເຮົາບໍ່ສົມຄວນຈະໄດ້ຮັບນັ້ນ ຈະສາມາດເຮັດໃຫ້ພວກເຮົາເຂັ້ມແຂງຂຶ້ນເພື່ອຈະໄດ້ປະເຊີນໜ້າກັບຊ່ວງເວລາທີ່ຫຍຸ້ງຍາກອື່ນໆທີ່ຈະມາສູ່ພວກເຮົາໃນພາຍໜ້າ. ໃນຖານະເປັນພຣະຜູ້ເປັນເຈົ້າ, ອົງພຣະເຢຊູຊົງມີສິດອຳນາດອະທິປະໄຕທົ່ວໂລກ. ທຸກຄົນຈະຮັບຮູ້ເຖິງຄວາມເປັນພຣະເຈົ້າຂອງພຣະອົງເມື່ອພຣະອົງຊົງສະເດັດກັບມາ (ຟລປ 2:10-11), ແລະຄວາມເປັນພຣະເຈົ້າຂອງພຣະອົງເຮັດໃຫ້ຜູ້ທີ່ເຊື່ອດຳເນີນຊີວິດໃນຊັຍຊະນະໃນທຸກວັນນີ້. ພວກເຮົາຢາກຈະເຊື່ອຢ່າງແນ່ນອນວ່າການເລືອກສິ່ງທີ່ຖືກຕ້ອງຈະເຮັດໃຫ້ເສັ້ນທາງເດີນງ່າຍໃນພາຍໜ້າ, ແລະໂດຍປົກກະຕິພວກເຮົາຈະບໍ່ປະເຊີນກັບການຂົ່ມເຫັງເພາະການເລືອກທີ່ຖືກຕ້ອງ.ເຖິງຢ່າງໃດກໍ່ຕາມ, ພວກເຮົາກຳລັງດຳລົງຊີວິດຢູ່ໃນໂລກທີ່ປະຊາຊົນປະສົບກັບຄວາມເຈັບປວດນັບມື້ນັບຫຼາຍຂຶ້ນ, ໂດຍການດຳລົງຊີວິດທີ່ຊອບທັມ.ພື້ນຖານແຫ່ງຄວາມເຊື່ອຂອງພວກເຮົາໃນອົງພຣະຄຣິດນັ້ນແມ່ນປອດພັຍ. ພຣະອົງຊົງເປັນພຣະສີລາຂອງພວກເຮົາ, ພຣະສີລາເສົາເອກຂອງພວກເຮົາ. ເຫດສະນັ້ນ, ເປໂຕໄດ້ຢືນຢັນວ່າພວກເຮົາບໍ່ຕ້ອງຢ້ານກົວຫຼືຖືກຂົ່ມຂູ່. ຄຳເວົ້າພາສາກຣີກ ຕີຄວາມໝາຍ "<u>ຂົ່ມຂູ່</u>" ວ່າ <u>*ທາຣັສໂສ*</u> *(tarasso)* ຊຶ່ງມີຄວາມໝາຍວ່າພວກເຮົາບໍ່ຈຳເປັນຕ້ອງປ່ອຍໃຫ້ຄົນອື່ນເຮັດໃຫ້ພວກເຮົາວຸ້ນວາຍດ້ານພາຍໃນ (ຈິດໃຈ) ຫລືລົບລ້າງຄວາມງຽບສງົບທີ່ພວກເຮົາມີໃນອົງພຣະຄຣິດ. ໃນຄວາມເປັນຈິງ, ພວກເຮົາໄດ້ຮັບພຣະພອນທີ່ໄດ້ຖືກນັບເຂົ້າຢູ່ໃນບັນດາຜູ້ທີ່ທຸກທໍຣະມານຍ້ອນຄວາມຊອບທັມ. ສິ່ງນີ້ສົມຄວນເປັນການຊຸກຍູ້ຈິດໃຈພວກເຮົາແລະເປັນການເພີ່ມຄວາມເຂັ້ມແຂງໃຫ້ແກ່ການແກ້ໄຂບັນຫາຂອງພວກເຮົາ, <u>ບໍ່ແມ່ນເຮັດໃຫ້ພວກເຮົາຫຍຸ້ງຍາກຫລືສັ່ນສະເທືອນຄວາມງຽບສງົບພາຍໃນຈິດໃຈຂອງພວກເຮົາ</u>.

| |
|---|
| ຄວາມຫວັງຂອງຄຣິສຕຽນສາມາດສນັບສນຸນຄ້ຳຈຸນພວກເຮົາ ຜ່ານສະພາບການທີ່ຫຍຸ້ງຍາກໄດ້ແນວໃດ? |

## 3.1 ເປໂຕ 3:15-17

*15 ແຕ່ໃນໃຈຂອງທ່ານທັງຫຼາຍ, ຈົ່ງໂຄຣົບນັບຖືພຣະຄຣິດວ່າເປັນອົງພຣະຜູ້ເປັນເຈົ້າ. ຈົ່ງມີໃຈພ້ອມຢູ່ສເມີເພື່ອພວກ
ທ່ານຈະສາມາດຕອບແກ້ຕົວໄດ້ຕໍ່ທຸກຄົນທີ່ຖາມພວກທ່ານວ່າທ່ານມີເຫດຜົນປະການໃດຈຶ່ງມີຄວາມຫວັງຢ່າງນີ້?
16 ແຕ່ຈົ່ງຕອບດ້ວຍໃຈສຸພາບແລະຢຳເກງແລະໃຫ້ມີໃຈສຳນຶກຜິດແລະຊອບອັນເສາະໃສເພື່ອວ່າ, ເມື່ອພວກທ່ານ
ຖືກປມາດນິນທາຄົນທີ່ກ່າວຫຍາບຊ້າຕໍ່ທັມນຽມຄຣິສະຕຽນອັນດີຂອງພວກທ່ານນັ້ນກໍຈະໄດ້ຮັບຄວາມອັບອາຍ.
17 ເພາະວ່າຖ້ານ້ຳພຣະທັຍຂອງພຣະເຈົ້າຊົງເຫັນດີໃຫ້ພວກທ່ານທົນທຸກຍ້ອນເຮັດການດີກໍດີກວ່າຕ້ອງທົນທຸກຍ້ອນ
ເຮັດການຊົ່ວ.*

ໃນເມື່ອພວກເຮົາຖືກທົດລອງໃຫ້ມີຄວາມຢ້ານກົວຫຼືຫັນເຫໄປທາງຂ້າງ, ເປໂຕໄດ້ໃຫ້ຄຳຕອບແກ່ພວກເຮົາທີ່ຖືກຕ້ອງພຽງສິ່ງດຽວ:"ແຕ່ໃນໃຈຂອງທ່ານທັງຫຼາຍ, ຈົ່ງໂຄຣົບນັບຖືພຣະຄຣິດວ່າເປັນອົງພຣະຜູ້ເປັນເຈົ້າ. ຈົ່ງມີໃຈພ້ອມຢູ່ສເມີເພື່ອພວກທ່ານຈະສາມາດຕອບແກ້ຕົວໄດ້ຕໍ່ທຸກຄົນທີ່ຖາມພວກທ່ານວ່າທ່ານມີເຫດຜົນປະການໃດຈຶ່ງມີຄວາມຫວັງຢ່າງນີ້." (ຂໍ້ 15). ການເຊື່ອມຕໍ່ແຕ່ກົງກັນຂ້າມກັບຄວາມຢ້ານກົວແລະການຂົ່ມຂູ່ຕໍ່ຄວາມບໍຣິສຸດແລະຄວາມພ້ອມມີດັ່ງນີ້:

- **ຄວາມບໍຣິສຸດ.** ເປໂຕໄດ້ຮັບຮູ້ວ່າ ຖ້າວ່າຜູ້ເຊື່ອຈະເຮັດໃຫ້ສັກສິດ-ຖືກແຍກອອກ-ພຣະຄຣິດຊົງບໍຣິສຸດຕັ້ງຢູ່ໃນຫົວໃຈຂອງພວກເພິ່ນແລ້ວ ພວກເຮົາຈະບໍ່ກັງວົນກ່ຽວກັບສິ່ງທີ່ຄົນອື່ນຄິດ. ພວກເຮົາຈະບໍ່ຖືກຂົ່ມຂູ່, ແຕ່ກົງກັນຂ້າມ ພວກເຮົາຈະເປັນພະຍານອັນອົງອາດກ້າຫານແກ່ອຳນາດຂອງ<u>ຂ່າວປະເສີດທີ່ປ່ຽນແປງຊີວິດ</u>.
- **ຄວາມພ້ອມ.** ເມື່ອພວກເຮົາໄດ້ແກ້ໄຂບັນຫາຄວາມບໍຣິສຸດແລະຄວາມເປັນພຣະເຈົ້າເປັນທີ່ຮຽບຮ້ອຍແລ້ວ, ພວກເຮົາສາມາດກຽມພ້ອມທີ່ຈະໃຫ້ການປ້ອງກັນແກ່ເຫດຜົນສຳລັບຄວາມຫວັງຂອງພວກເຮົາໃນພຣະຄຣິດ. ພວກເຮົາບໍ່ຈຳເປັນຕ້ອງສະດຸດຫາຄຳເວົ້າຫລືຖອຍກັບມາຫາຄວາມຢ້ານກົວເມື່ອຖືກຖາມກ່ຽວກັບສິ່ງທີ່ພວກເຮົາເຊື່ອ.ພວກເຮົາສາມາດຢືນຢູ່ຢ່າງໝັ້ນໃຈໃນຄວາມເປັນພຣະເຈົ້າຂອງອົງພຣະຄຣິດເພາະວ່າພວກເຮົາໄດ້ຕົກລົງວ່າ<u>ພວກເຮົາແມ່ນໃຜແລະພວກເຮົາເປັນຂອງຜູ້ໃດ</u>? ຄຳເວົ້າຂອງເປໂຕຊີ້ໄປຫາຄວາມພົວພັນ (ຂອງໃຜຜູ້ນຶ່ງ) *ລະຫວ່າງ* ຄວາມຂາດການກຽມພ້ອມທີ່ຈະເວົ້າກ່ຽວເຣື່ອງຄວາມຫວັງຂອງຂ່າວປະເສີດ *ແລະ*ການຮັບຮູ້ຂອງລາວວ່າອົງພຣະເຈົ້າຊົງເປັນອົງບໍຣິສຸດ. ຖ້າພວກເຮົາບໍ່ໄດ້ແຍກພຣະຄຣິດອອກໃນຖານະເປັນອົງພຣະຜູ້ເປັນເຈົ້າ-ສະຖານທີ່ ທີ່ຖືກຕ້ອງຂອງພຣະອົງ-ພວກເຮົາສາມາດສົ່ງສຽງ ຫຼືປ່ຽນການເວົ້າຈາໄດ້ງ່າຍ!

<u>ຄວາມພ້ອມ</u>ຂອງພວກເຮົາແມ່ນອາຣົມທີ່ດີກັບ<u>ຄວາມອ່ອນໂຍນ</u>. ຄວາມອ່ອນໂຍນອາດຈະຖືກແປເປັນ<u>ຄວາມສຸພາບ</u> ແລະເວົ້າເຖິງພຣະຄຸນທີ່ໄດ້ຖືກຝັງເລິກໄວ້ໃນຕົວເຮົາ. <u>*ມັນແມ່ນທັສນະຂອງຄວາມຖ່ອມໃຈທີ່ຖືວ່າພຣະຄຣິດແລະບຸກຄົນອື່ນສຳຄັນກວ່າຕົນເອງ.*</u>

| |
|---|
| ຊີວິດຂອງພວກເຮົາສາມາດສະແດງອອກໃຫ້ຄົນອື່ນເຫັນວ່າ<u>ພຣະຄຣິດຊົງເປັນພຣະເຈົ້າ</u> ໂດຍວິທີໃດ? |

## ນຳໃຊ້ໃນຊີວິດ:

ທ່ານຈະອົດທົນຕໍ່ຄວາມທົນທຸກທໍຣະມານເນື່ອງຈາກຄວາມຫວັງທີ່ທ່ານມີໃນອົງພຣະຄຣິດຢ່າງໃດ? ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງຍອມຈຳນົນ.** ຈົ່ງເລືອກທີ່ຈະເຫັນຊີວິດແລະສະຖານະການຂອງທ່ານໃນມຸມມອງຂອງພຣະເຈົ້າ. ຈົ່ງຍອມຮັບຄວາມເປັນພຣະເຈົ້າຂອງອົງພຣະຄຣິດແລະວາງໃຈໃນພຣະອົງໂດຍບໍ່ຄຳນຶງເຖິງການກະທຳຂອງຄົນອື່ນ.
- **ຈົ່ງອວຍພອນ.** ຖ້າມີໃຜຜູ້ນຶ່ງປະຕິບັດກັບທ່ານດັ່ງສັດຕຣູ ຫຼື ທ່ານເອງປະຕິບັດຕໍ່ຄົນອື່ນດັ່ງນັ້ນ, ຈົ່ງສແວງຫາການອວຍພອນຄົນນັ້ນ ດ້ວຍຄວາມຮັກ, ດ້ວຍຄວາມເມດຕາ, ແລະ ດ້ວຍຄວາມຖ່ອມຕົວ.

  **ຈົ່ງປົກປ້ອງ.** ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ຊົງປະທານໂອກາດໃນການສະແດງ ແລະປົກປ້ອງຄຸ້ມຄອງຄວາມຫວັງທີ່ຢູ່ໃນຕົວທ່ານ. ໃນເມື່ອພຣະເຈົ້າຊົງເປີດປະຕູນັ້ນໃຫ້ທ່ານ, ຈົ່ງຕຽມພ້ອມທີ່ຈະເວົ້າຄຳພະຍານຂອງຄວາມຫວັງຂອງທ່ານໃນອົງພຣະຄຣິດ.

ມີຄຳເວົ້າໜ້ອຍຄຳສາມາດບັນລະຍາຍກ່ຽວກັບການຂາດຄວາມຫວັງດັ່ງ“**ມະເລງ**”. ແຕ່ວ່າ, ບໍ່ວ່າຈະເປັນຄວາມທຸກທໍຣະມານປະເພດໃດໃນຊີວິດຂອງເຮົາ, ພວກເຮົາສາມາດ**ອົດທົນ**ໄດ້<u>*ຍ້ອນຄວາມຫວັງຂອງພວກເຮົາໃນອົງພຣະຄຣິດ*</u>.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ http://lsbf.us ໂດຍSSK**